No: 939
Date: 17 JUL 2017
BCEL

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0168/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2017

ໜັງສືແຈ້ງຕອບ

ເຖິງ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ,

ເລື່ອງ: ອະນຸມັດການອອກຈຳໜ່າຍຮຸ້ນໃຫ້ແກ່ມອນຊິນ ແລະ ຜູ້ຖືຮຸ້ນເດີມ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

- ອີງຕາມ ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ 018/ຄຄຊ ລົງວັນທີ 22 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີອອກຈຳໜ່າຍຮຸ້ນ ສະບັບເລກທີ 170/ທຄຕລ ລົງວັນທີ 11 ເມສາ 2017;
- ອີງຕາມ ທິດຊີ້ນຳຂອງທ່ານ ປະທານ ຄຄຊ ລົງ ວັນທີ 07 ກໍລະກົດ 2017;

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍແຈ້ງມາຍັງ ທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ (ທຄຕລ) ຊາບວ່າ: ຜ່ານການຄົ້ນຄວ້າເອກະສານປະກອບຄຳຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມອນຊິນ ແລະ ຜູ້ຖືຮຸ້ນເດີມ (PO ແລະ RO) ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ສຄຄຊ ເຫັນດີ ອະນຸມັດ ໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອອກຈຳໜ່າຍຮຸ້ນໃຫ້ແກ່ມອນຊິນ ແລະ ຜູ້ຖືຮຸ້ນເດີມ (PO ແລະ RO) ຕາມການສະເໜີຂອງ ທຄຕລ.

ສະນັ້ນ, ເພື່ອປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ແລະ ເຮັດໃຫ້ມອນຊິນໄດ້ຮັບຊາບຂໍ້ມູນຂ່າວສານ ກ່ຽວກັບການອອກຈຳໜ່າຍຮຸ້ນໃນຄັ້ງນີ້ ສຄຄຊ ສະເໜີໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈັດຕັ້ງ ການໂຄສະນາ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນດັ່ງກ່າວຜ່ານພາຫະນະສື່ ມວນຊົນຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ ພ້ອມທັງເຜີຍແຜ່ໜັງສືຊວນຊື້ສະບັບສົມບູນ ຜ່ານທາງລະບົບ ເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຄຄຊ ເປັນໄລຍະເວລາຢ່າງໜ້ອຍ ຫ້າວັນຕໍ່ເນື່ອງ ກ່ອນວັນເປີດການຈອງຊື້ຮຸ້ນ (ໃບອະນຸຍາດ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າສຳນັກງານ

ສາຍສະໝອນ ຈັນທະຈັກ

ສຳເນົາສົ່ງ:
- ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ: 1 ສະບັບ ເພື່ອຊາບ ແລະ ເປັນບ່ອນອີງ.